ສາທາລະ ະລັດ ປະຊາທິປະໄຕ ປະຊາຊົ ລາວ

ສັ ຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະ າຖາວອ

------------------------

<u>ສຳ ັກງາ າຍົກລັດຖະມົ ຕີ</u>

<u>ອົງກາ ທ່ອງທ່ຽວແຫ່ງຊາດ</u> ເລກທີ 060 /ອທຊ

ະຄອ ຫລວງວຽງຈັ , ວັ ທີ 26/02/2007

# ຂໍ້ຕົກລົງ

## ວ່າດ້ວຍກາ ຈັດລະດັບມາດຕະຖານຂັ້ນ

## ໂຮງແຮມ - ເຮືອນພັກ ຢູ່ ສປປລາວ

- ອີງຕາມກົດໝາຍວ່າດ້ວຍ ການທ່ອງທ່ຽວ ສະບັບເລກທີ 10 / ສພຊ, ລົງວັທີ 09 /11 / 2005.
- ອີງຕາມດຳລັດສະບັບເລກທີ 91/ນຍ, ລົງວັນທີ 30/06/2004 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງກາ ທ່ອງທ່ຽວແຫ່ງຊາດ.
- ອີງຕາມຂໍ້ກຳ ົດສະບັບເລກທີ 159/ສ ຍ, ລົງວັ ທີ 30/07/1997 ວ່າດ້ວຍກາ ຄຸ້ມຄອງທຸລະກິດ ໂຮງແຮມ - ເຮືອນພັກ ..
- ເພື່ອເຮັດໃຫ້ການບໍລິການໃນຂະແໜງທຸລະກິດ ໂຮງແຮມ - ເຮືອນພັກ ມີມາດຕະຖານ ແລະ ຄຸນນະຄຸນນະພາບດີ, ຕອບສະໜອງໄດ້ກັບຄວາມຕ້ອງການ ຂອງ ການທ່ອງທ່ຽວທີ່ມີການຂະຫຍາຍຕົວຢ່າງວ່ອງໄວຕໍ່ເນື່ອງ.

## ລັດຖະມົ ຕີ, ປະປະທາ , ອົງກາ ທ່ອງທ່ຽວແຫ່ງຊາດ

## ອອກຂໍ້ຕົກລົງ :

## ພາກທີ I

## ບົດບັນຍັດທົ່ວໄປ

<u>ມາດຕາ 1</u>: **ຈຸດປະສົງ:**

ການຈັດລະດັບຂັ້ນໂຮງແຮມ - ເຮືອນພັກ ຢູ່ ສປປ.ລາວ ມີຈຸດປະສົງ ດັ່ງຕໍ່ໄປນີ້:

- ເພື່ອຍົກລະດັບຂອງຜະລິດຕະພັນ ແລະ ການບໍລິການຢູ່ໃນສະຖານທີ່ພັກແຮມໃຫ້ໄດ້ຕາມມາດຕະຖາ ສາກົ .
- ເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ້ດຳເນີນທຸລະກິດພັກແຮມ ແລະ ຜູ້ທີ່ໃຊ້ບໍລິການ,ຮັບປະກັ ຄວາມຍຸດຕິທຳ, ເໝາະສົມ ແລະ ມີລັກສະ ະດຶງດູດຈາກກາ ບໍລິກາ ໃ ສະຖາ ທີ່ພັກແຮມເຊັ່ນ:ຮັບປະກັນຄວາມປອດໄພທາງດ້ານຊີວິດແລະຊັບສິ ຂອງຜູ້ຊົມໃຊ້ບໍລິກາ
- ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງຕະຫຼາດທ່ອງທ່ຽວ ທີ່ມີຄວາມແຕກ

ຕ່າງກັນ ນັບມື້ນັບສູງຂຶ້ນ.

- ເພື່ອແຍກລະດັບສະຖານທີ່ພັກແຮມຕາມມາດຕະຖານຂອງຜະລິດຕະພັນ ແລະ ການບໍລິການ,ແນໃສ່ຊຸກຍູ້ແລະສົ່ງເສີມດ້ານຄຸນນະພາບໃຫ້ນັບມື້ນັບສູງຂຶ້ນຂອງສະຖານທີ່ພັກແຮມ, ພ້ອມທັງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການລົງທຶນໃນຂະແໜງທຸລະກິດທີ່ພັກແຮມໃຫ້ແຂງແຮງຍິ່ງໆຂຶ້ນ.

**ມາດຕາ 2: ຄາດໝາຍ**

- ຍົກລະດັບມາດຕະຖານທຸລະກິດ ໃນຂະແໜງການພັກແຮມ ໃຫ້ໄດ້ມາດຕະຖານທຽບເທົ່າສາກົ , ສອດຄ່ອງກັບກົດໝາຍການທ່ອງທ່ຽວ ແລະ ນະໂຍບາຍສົ່ງເສີມການລົງທຶນ ກໍຄືແຜ ພັດທະ າເສດຖະກິດ ສັງ ຄົມແຫ່ງ ຊາດ ຂອງ ສປປ.ລາວ .

**ມາດຕາ 3 : ິຍາມຄຳສັບ**

- ທຸລະກິດທີ່ພັກແຮມຫມາຍເຖິງການບໍລິການໃຫ້ແກ່ນັກທ່ອງທ່ຽວໃນການພັກແຮມຊົ່ວຄາວຢູ່ ໂຮງແຮມ,ເຮືອ ພັກ, ຣີສອດ, ໂມເຕັ , ເຮືອທ່ອງທ່ຽວ, ຄ້າຍພັກແຮມ, ຫ້ອງພັກ ແລະ ສະຖານທີ່ອື່ນໆ ທີ່ຈັດຫາໃຫ້ເປັນທີ່ພັກແຮມແກ່ນັກທ່ອງທ່ຽວໂດຍທົ່ວໄປ;
- ໂຮງແຮມ: ໝາຍເຖິງສະຖານທີ່ພັກແຮມຊຶ່ງປະກອບດ້ວຍ 15 ຫ້ອງນອນຂຶ້ນໄປ, ມີສິ່ງອຳນວຍຄວາມສະດວກ, ມີອຸປະກອນເຄື່ອງໃຊ້ທີ່ມີຄຸນນະພາບ ແລະ ການບໍລິການທີ່ມີມາດຕະຖາ ດີ , ມີຈຸດປະສົງດຳເນີນທຸລະກິດ ບໍລິການ ທີ່ພັກເຊົາຊົ່ວຄາວ ສຳລັບຄົນເດີນທາງ ໂດຍມີຄ່າບໍລິກາ ;
- ເຮືອນພັກ: ໝາຍເຖິງສະຖານທີ່ພັກແຮມປະກອບດ້ວຍ 14 ຫ້ອງນອນລົງມາແຕ່ບໍ່ຫລຸດ 5 ຫ້ອງນອນ, ມີສິ່ງອຳນວຍຄວາມສະດວກ, ມີອຸປະກອນຮັບໃຊ້ທີ່ເຫມາະສົມ ແລະ ການບໍລິການທີ່ມີມາດຕະຖານ, ມີຈຸດປະສົງດຳເນີນທຸລະກິດບໍລິການ ທີ່ພັກແຮມຊົ່ວຄາວສຳລັບຄົ ເດີ ທາງໂດຍມີຄ່າບໍລິກາ .
- ຣີສອດ:ຫມາຍເຖິງສະຖານທີ່ພັກແຮມທີ່ຕັ້ງຢູ່ຕາມແຫລ່ງທ່ອງທ່ຽວ, ມີສິ່ງອຳນວຍ ຄວາມສະດວກ, ມີອຸປະກອນເຄື່ອງໃຊ້ ແລະ ການບໍລິການທີ່ມີມາດຕະ ຖານດີ.
- (ດາວ): ຫມາຍເຖິງເຄື່ອງໝາຍລະດັບຂັ້ນໂຮງແຮມ ທີ່ອົງການຄຸ້ມຄອງກຳນົດໃຫ້ເພື່ອຊີ້ບອກຄຸນນະພາບ ແລະ ມາດຕະຖານການບໍລິການ ຂອງ ໂຮງແຮມນັ້ນໆ .
- 5 ດາວ (★★★★★): ຫມາຍເຖິງເຄື່ອງໝາຍລະດັບຂັ້ນໂຮງແຮມ ທີ່ກຳນົດຄຸນນະພາບ ແລະ ມາດຕະຖາ ກາ ບໍລິກາ ລະດັບສູງສຸດ .
- 1 ດາວ(★): ຫມາຍເຖິງເຄື່ອງໝາຍລະດັບຂັ້ນໂຮງແຮມທີ່ກຳນົດຄຸນນະພາບແລະມາດຕະຖານການບໍລິການຂັ້ນເລີ່ມຕົ້ນຂອງການຈັດລຳດັບ .
- (ດອກຈຳປາ) : ຫມາຍເຖິງເຄື່ອງໝາຍລະດັບຂັ້ນເຮືອນພັກທີ່ອົງການຄຸ້ມຄອງ ກຳນົດໃຫ້ເພື່ອເປັນເຄື່ອງຫມາຍຊີ້ບອກເຖິງຄຸນນະພາບແລະມາດຕະຖານການບໍລິການຂອງເຮືອນພັກນັ້ນໆ .
- 3 ດອກຈຳປາ (❀❀❀): ຫມາຍເຖິງເຄື່ອງໝາຍລະດັບຂັ້ນເຮືອນພັກທີ່ກຳນົດຄຸນນະພາບ

ແລະມາດຕະຖາ ສູງສຸດ;

- 1 ດອກຈຳປາ(❀):ໝາຍເຖິງເຄື່ອງໝາຍລະດັບຂັ້ນເຮືອນພັກທີ່ກຳນົດ ຄຸນນະພາບແລະມາດຕະຖານຂັ້ນເລີ່ມຕົ້ນຂອງການຈັດລະດັບ.

## ພາກທີ II
## ການຈັດລະດັບຂັ້ນໂຮງແຮມ - ເຮືອນພັກ

**ມາດຕາ 4: ມາດຕະຖານລະດັບຂັ້ນ ໂຮງແຮມ - ເຮືອນພັກ :**

- ໂຮງແຮມ ທີ່ມີຈຸດປະສົງຈັດລະດັບຂັ້ນຂອງຕົນ ຕ້ອງປະຕິບັດຕາມມາດຕະຖານທີ່ກຳນົດໄວ້ຢ່າງຖືກຕ້ອງຄົບຖ້ວນຈຶ່ງຈະໄດ້ຮັບການພິຈາລະນາ. ມາດຕະຖານລະອຽດ ໂຮງແຮມ ໄດ້ກຳ ົດໄວ້ ໃ ເອກະສາ ຊ້ອ ທ້າຍ 1 .
- ເຮືອນພັກທີ່ມີຈຸດປະສົງຈັດລະດັບຂັ້ນຂອງຕົນ ຕ້ອງປະຕິບັດຕາມມາດຕະຖານທີ່ກຳນົດໄວ້ຢ່າງຖືກຕ້ອງຄົບຖ້ວນຈຶ່ງຈະໄດ້ຮັບການພິຈາລະນາ. ມາດຕະຖານ ເຮືອນພັກ ລະອຽດ ໄດ້ກຳ ົດໄວ້ໃ ເອກະສາ ຊ້ອ ທ້າຍ 2 .

**ມາດຕາ 5 : ເຄື່ອງໝາຍ ລະດັບຂັ້ນ ຂອງ ໂຮງແຮມ - ເຮືອນພັກ :**

- ໂຮງແຮມ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງ ຈະໄດ້ຈັດລະດັບຂັ້ນດ້ວຍເຄື່ອງຫມາຍ “ດາວ” ຕາມມາດຕາ 3 ທີ່ກຳນົດໄວ້ໃນຂໍ້ຕົກລົງ ສະບັບນີ້.
- ເຮືອນພັກ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງຈະໄດ້ຈັດ ລະດັບຂັ້ນດ້ວຍເຄື່ອງຫມາຍ “ດອກຈຳປາ” ຕາມມາດຕາ 3 ທີ່ ກຳນົດໄວ້ໃນຂໍ້ຕົກລົງ ສະບັບນີ້.
- ເຄື່ອງຫມາຍບອກລະດັບຂັ້ນຂອງໂຮງແຮມ - ເຮືອນພັກ ຕ້ອງສອດຄ່ອງ ກັບມາດຕະຖານ ທີ່ ກຳນົດອອກຕາມແຕ່ລະລຳດັບຂັ້ນ ນັ້ນໆ.
- ການກວດກາປັບປຸງການຈັດລະດັບຂັ້ນ ໂຮງແຮມ - ເຮືອນພັກ ຈະປະຕິບັດທຸກໆ3 ປີ ແລະຊ້າສຸດບໍ່ກາຍ 5 ປີ ຫລື ຕາມກາ ສະເຫ ີຂອງຫົວຫ ່ວຍທຸລະກິດ ທີ່ມີຄວາມຕ້ອງການ ແລະ ຄວາມພ້ອມ ທີ່ ຈະປັບປຸງປ່ຽນແປງລະດັບຂັ້ນຂອງຕົນ.

**ມາດຕາ 6 ເອກະສານຄຳຮ້ອງໃນການສະເໜີຈັດລະດັບຂັ້ນ ໂຮງແຮມ - ເຮືອນພັກ :**

ໂຮງແຮມ - ເຮືອນພັກ ທີ່ ມີຈຸດປະສົງຈັດລະດັບຂັ້ນ ຂອງຕົນຕ້ອງ ປະກອບເອກະສານ ຄົບຖ້ວນຕາມແບບເອກະສານຄຳຮ້ອງ ທີ່ ກຳນົດໄວ້ດັ່ງລຸ່ມນີ້ ຈຶ່ງຈະໄດ້ຮັບການພິຈາລະນາ:

1 - ໃບຄຳຮ້ອງຂໍຈັດລະດັບຂັ້ນ ໂຮງແຮມ - ເຮືອນພັກ ຂອງ ທຸລະກິດ;

2 - ໃບສຳເນົາທະບຽນອາກອນ;

3 - ໃບສຳເນົາທະບຽນວິສະຫະກິດ;

4 - ສຳເນົາໃບອະນຸຍາດດຳເນີນທຸລະກິດພັກແຮມຂອງອົງການທ່ອງທ່ຽວແຫ່ງຊາດຫລືພະແ ກ / ຫ້ອງກາ ທ່ອງທ່ຽວແຂວງ ແລະ ະຄອ ຫລວງ ອອກໃຫ້;

5 - ໃບອະນຸຍາດປຸກສ້າງຂອງເຈົ້າຫນ້າທີ່ກ່ຽວຂ້ອງອອກໃຫ້;

6 - ໃບອະນຸຍາດລົງທຶນ, ສໍາປະທານ ຫລື ເຊົ່າ/ຊື້, ມອບ/ ໂອນ ກິດຈະການທຸລະກິດ.

7. ບັ ຊີພະ ັກງາ ທັງໝົດ .

8. ບັ ຊີດຸ່ ດ່ຽງທຸລະກິດ.

9. ໃບມອບອາກອນ/ ອາກອນກາໍໄລ ຄັ້ງຫລ້າສຸດ.

ມາດຕາ 7: ບ່ອ ຮັບ ເອກະສາ ຄໍາຮ້ອງກາ ສະເໜີຂໍຈັດລະດັບຂັ້ນ ໂຮງແຮມ - ເຮືອນພັກ :

7.1 ລະດັບຂັ້ນ 3 ດາວ ຫາ 5 ດາວ: ຢື່ນທີ່ກົມຄູ້ມຄອງທຸລະກິດທ່ອງທ່ຽວ ແລະ ໂຮງແຮມ, ອົງການທ່ອງທ່ຽວແຫ່ງຊາດ, ະຄອ ຫລວງວຽງຈັ .

7.2 ລະດັບຂັ້ນ 1 ດາວ ຫາ 2 ດາວ ; 1 ດອກຈໍາປາ ຫາ 3 ດອກຈໍາປາ ຢື່ນທີ່ ພະແນກ / ຫ້ອງການທ່ອງທ່ຽວປະຈໍາບັ ດາແຂວງ, ະຄອ ຫລວງ , ຕາມທີ່ຕັ້ງຂອງ ໂຮງແຮມ - ເຮືອນພັກ ນັ້ນໆ ມີທີ່ຕັ້ງ ແລະ ດໍາເນີນທຸລະກິດຢູ່..

7.3 ໂຮງແຮມ - ເຮືອນພັກ ທີ່ ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ແລະ ເຄື່ອນໄຫວທຸລະກິດມາແລ້ວນັ້ນ, ສາມາດ ຢື່ນຄໍາຮ້ອງ ສະເໜີຈັດລະດັບຂັ້ນໄດ້ ຕາມຈຸດປະສົງຂອງທຸລະກິດ. ສໍາລັບ ໂຮງແຮມ, ເຮືອນພັກ ທີ່ໄດ້ຈັດລະດັບຂັ້ນແລ້ວ, ຫາກຕ້ອງການຈັດລະດັບຂັ້ນຄືນໃໝ່ຕ້ອງຢື່ນຄໍາຮ້ອງ ລ່ວງໜ້າ 1 ປີ ກ່ອນວັນໝົດ ອາຍຸ ຂອງລະດັບຂັ້ນທີ່ທຸລະກິດໄດ້ຮັບການຢັ້ງຢືນມາກ່ອນ. .

7.4 ການພິຈາລະນາອະນຸມັດລະດັບຂັ້ນແມ່ນບໍ່ເກີນ 90 ວັນ ແລະ ລະດັບຂັ້ນ ໂຮງແຮມ - ເຮືອນພັກ ມີອາຍຸ ຈໍໃຊ້ໄດ້ 05 ປີ.

**ມາດຕາ 8: ສິດຜົ ປະໂຫຍດ ແລະ ພັ ທະ ຂອງທຸລະກິດ** ໂຮງແຮມ - ເຮືອນພັກ :

- ສິດໃນການສະເໜີປັບປຸງຫລືຍົກລະດັບຂັ້ນຂອງສະຖານທີ່ພັກແຮມທີ່ຕົນລົງທຶນ ໃຫ້ອົງການຄຸ້ມຄອງພິຈາລະນາຕາມເງື່ອນໄຂ;
- ມີສິດເຂົ້າຮ່ວມເປັນສະມາຊິກຂອງສະມາຄົມທຸລະກິດ ໂຮງແຮມ - ຮ້ານອາຫານລາວ;
- ມີສິດໄດ້ຮັບຂໍ້ມູນຂ່າວສານໃໝ່ດ້າ ອຸດສະຫະກໍາທ່ອງທ່ຽວ;

* ສິດໄດ້ຮັບການປົກປ້ອງຢ່າງຍຸຕິທໍາຈາກການກະທໍາຂອງຜູ້ອື່ນທີ່ເຮັດໃຫ້ສະຖານທີ່ພັກແຮມໄດ້ຮັບຄວາມ ເສຍຫາຍ ຫລື ເສຍພາບພົດ ຂອງ ລະດັບມາດຕະຖານຂອງທຸລະກິດນັ້ນໆ, ແລະ

***ມີ ພັນທະໜ້າທີ່ ໃນການ :***

- ປະກອບພື້ນຖານວັດຖຸອຸປະກອນໃຫ້ເໝາະສົມຕາມເງື່ອນໄຂ ແລະ ລະດັບຂັ້ນຂອງສະຖາ ທີ່ພັກເຊົາທີ່ໄດ້ກໍານົດໄວ້;
- ຈ່າຍຄ່າທໍານຽມຕາມລະບຽບການຂໍປັບປຸງຫລືຍົກລະດັບຂັ້ນຂອງສະຖານທີ່ພັກແຮມໃນແຕ່ລະຄັ້ງທີ່ມີການພິຈາລະນາ;
- ຮ່ວມມືກັບຄະນະກໍາມະການຈັດລະດັບຂັ້ນ ສະຖານທີ່ພັກແຮມ ໃນການປະຕິບັດໜ້າທີ່ໃຫ້ສໍາເລັດຜົ ;

## ພາກທີ III

## ອົງກອນທີ່ຮັບຜິດຊອບພິຈາລະນາການຈັດລະດັບຂັ້ນ ໂຮງແຮມ - ເຮືອນພັກ .

<u>ມາດຕາ 9</u>: **ຄະນະກຳມະການຈັດລະດັບຂັ້ນ** ໂຮງແຮມ - ເຮືອນພັກ ມີ ດັ່ງນີ້:

1. ຄະນະກຳມະການຈັດລະດັບ ຂັ້ນ ສູນກາງ;
2. ຄະນະກຳມະການຈັດລະດັບ ຂັ້ນ ແຂວງ ແລະ ນະຄອນຫລວງ .

<u>ມາດຕາ 10</u>: **ຄະນະກຳມະການຈັດລະດັບຂັ້ນ ສູນກາງ** ປະກອບດ້ວຍ:

1 . ຮອງປະທາ ອົງກາ ທ່ອງທ່ຽວແຫ່ງຊາດ ເປັ ປະທາ
2. ຫົວໜ້າກົມຄຸ້ມຄອງທຸລະກິດທ່ອງທ່ຽວ-ໂຮງແຮມ ເປັ ຮອງປະທາ
3. ຄະ ະກົມວັດທະ ະທຳມະຫາຊົ ເປັ ຄະ ະ
4. ຄະ ະກົມ ຕຳຫຼວດທ່ອງທ່ຽວ ເປັ ຄະ ະ
5. ຄະ ະກົມອະ າໄມ ເປັ ຄະ ະ
6. ຄະ ະກົມອົງກາ ວິທະຍາສາດເຕັກໂ ໂລຊີ ແລະ ສິ່ງແວດລ້ອມ . ເປັ ຄະ ະ
7. ຄະນະກົມສົ່ງເສີມການລົງທຶນພາຍໃນແລະຕ່າງປະເທດ ເປັ ຄະ ະ
8. ຄະນະສະມາຄົມທຸລະກິດ ໂຮງແຮມ - ຮ້ານອາຫານ ເປັ ຄະ ະ
9. ຄະ ະສະມາຄົມ ທຸລະກິດທ່ອງທ່ຽວ ເປັ ຄະ ະ
10. ຄະ ະສະມາຄົມຫັດຖະກຳ ເປັ ຄະ ະ

<u>ມາດຕາ 11</u>: **ຄະນະກຳມະການຈັດລະດັບຂັ້ນ, ແຂວງ ແລະ ນະຄອນຫລວງ**

ຄະນະກຳມະການດັ່ງກ່າວປະກອບດ້ວຍ:

1. ຄະນະປົກຄອງແຂວງ, ນະຄອນຫລວງ ຜູ້ຊີ້ນຳວຽກງານທ່ອງທ່ຽວ, ເປັ ຫົວຫ ້າຄະ ະ
2. ຫົວຫ ້າພະແ ກ / ຫ້ອງກາ ທ່ອງທ່ຽວປະຈຳແຂວງ ແລະ ະຄອ ຫລວງ ເປັ ຮອງຫົວຫ ້າຄະ ະ
3. ຕາງຫ ້າ ພະແ ກຖະແຫລງຂ່າວວັດທະ ະທຳ ເປັ ຄະ ະ
4. ຕາງຫ ້າ ພະແ ກສາທາລະ ະສຸກ, ເປັ ຄະ ະ
5. ຕາງໜ້າພະແ ກລົງທຶ ແຂວງ/ ະຄອ ຫລວງ ເປັ ຄະ ະ
6. ຕາງໜ້າ ປ ກ ສ/ຕຳຫລວດ ທ່ອງທ່ຽວ ແຂວງ, ະຄອ ຫລວງ ເປັ ຄະ ະ
7. ພະ ັກງາ ວິຊາກາ ພະແ ກ ແລະ ຫ້ອງກາ ທ່ອງທ່ຽວເມືອງ ເປັ ຄະ ະ
8. ຫົວໜ້າກຸ່ມທຸລະກິດໂຮງແຮມ - ຮ້ານອາຫານ ເປັ ຄະ ະ
9. ຫົວຫ ້າກຸ່ມທຸລະກິດທ່ອງທ່ຽວ, ເປັ ຄະ ະ
10. ຫົວຫ ້າກຸ່ມທຸລະກິດຫັດຖະກຳ, ເປັ ຄະ ະ;

<u>ມາດຕາ 12</u>: **ສິດ ແລະ ໜ້າທີ່ ຂອງ ຄະນະກຳມະການຈັດລະດັບຂັ້ນສູນກາງ:**

ຄະນະຈັດລະດັບຂັ້ນ ສູນກາງ ມີສິດ ແລະ ໜ້າທີ່ ດັ່ງນີ້ :

- ລົງກວດກາມາດຕະຖານ ແລະ ພິຈາລະນາຄຳຮ້ອງການສະເໜີຈັດຂັ້ນ ໂຮງແຮມ 5 ດາວ , 4 ດາວ ແລະ 3 ດາວໃນຂອບເຂດທົ່ວປະເທດ; ເພື່ອສະເໜີຂໍຄຳ ເຫັ ອະ ຸມັດ ຈາກ ປະທາ ອົງກາ ທ່ອງທ່ຽວແຫ່ງຊາດ.
- ຊີ້ນຳສົມທົບກັບຄະນະກຳມະການຈັດລະດັບຂັ້ນ ໂຮງແຮມ - ເຮືອນພັກຈຳແຂວງ , ນະຄອນຫລວງ ແລະ ກວດກາປັບປຸງຫົວໜ່ວຍທຸລະກິດ ທີ່ ບໍ່ໄດ້ຕາມເງື່ອນໄຂ ແລະ ມາດຕະຖານ ຂອງ ການຈັດລະດັບຂັ້ນ ໂຮງແຮມ - ເຮືອນພັກ .
- ປຸກລະດົມບັນດາຫົວໜ່ວຍທຸລະກິດ ໂຮງແຮມ - ເຮືອນພັກ ໃຫ້ຕັ້ງໜ້າ ປະກອບສ່ວນ ເຂົ້າໃນການຈັດລະດັບຂັ້ນ ໂຮງແຮມ - ເຮືອນພັກ .
- ເກັບກຳສັງລວມຄຳຄິດເຫັນຂອງບັນດາຫົວໜ່ວຍທຸລະກິດພັກແຮມກ່ຽວກັບຜົນການຈັດຕັ້ງປະຕິບັດການຈັດລະດັບຂັ້ນ ນຳສະເໜີ ລາຍງານ ຕໍ່ ປະທານ ອົງການທ່ອງທ່ຽວແຫ່ງຊາດ .
- ສະຫລຸບລາຍງານແຜນການ ການເຄື່ອນໄຫວຂອງວຽກງານການຈັດລະດັບຂັ້ນໃຫ້ຄະນະນຳ ອົງກາ ທ່ອງທ່ຽວແຫ່ງຊາດ ຮັບຊາບທຸກໄລຍະ .
- ປະເມີນຜົນໄດ້ຮັບໃນການປັບປຸງມາດຕະຖານການຈັດລະດັບຂັ້ນ ໂຮງແຮມ, ເຮືອ ພັກໃຫ້ສອດຄ່ອງໃ ແຕ່ລະໄລຍະ.

**<u>ມາດຕາ 13</u>: ສິດ ແລະ ໜ້າທີ່ ຂອງຄະນະກຳມະການຈັດລະດັບຂັ້ນ ໂຮງແຮມ - ເຮືອນພັກ ຂັ້ນແຂວງ ແລະ ະຄອ ຫລວງ .**

ຄະນະກຳມະການຈັດລະດັບຂັ້ນ ໂຮງແຮມ , ເຮືອນພັກ ຂັ້ນແຂວງ,ນະຄອນຫລວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ລົງກວດກາມາດຕະຖານ ແລະ ພິຈາລະນາຄຳຮ້ອງການສະເໜີຈັດຂັ້ນ ໂຮງແຮມ ລະດັບ 2 ດາວ ແລະ 1 ດາວ; ເຮືອ ພັກ ລະດັບ 1 ຫາ 3 ດອກຈຳປາ ໃ ຂອບເຂດຕົນຮັບຜິດຊອບ; ເພື່ອສະເໜີອະນຸມັດ ຈາກອຳນາດການປົກ ຄອງແຂວງ ຫລື ນະຄອນຫລວງ .
- ປຸກລະດົມຊຸກຍູ້ໃຫ້ບັນດາຫົວໜ່ວຍທຸລະກິດ ໂຮງແຮມ, ເຮືອນພັກ ຮັບຮູ້ໄດ້ ສິດແລະຜົປະໂຫຍດທີ່ຈະໄດ້ຮັບໃນການເຂົ້າຮ່ວມຈັດລະດັບຂັ້ນ .
- ຄົ້ນຄວ້າການສະເໜີຂໍຍົກລະດັບຂັ້ນ ຂອງ ໂຮງແຮມ , ເຮືອ ພັກ ທີ່ໄດ້ປັບປຸງຄຸນນະພາບມາດຕະຖານ ການ ບໍລິການ ຂອງ ຕົນຂຶ້ນເປັນ 3 ດາວ, 4 ດາວ, 5 ດາວ ຢູ່ໃນທ້ອງຖິ່ນ ທີ່ ຕົນຮັບຜິດຊອບ ສົ່ງໃຫ້ຄະນະກຳມະການຈັດລະດັບຂັ້ນ ຂອງ ສູນກາງ ເພື່ອພິຈາລະນາ ແລະ ລົງກວດກາເພື່ອກຳນົດລະດັບຂັ້ນ ໂຮງແຮມ, ເຮືອນພັກ ດັ່ງກ່າວ.
- ນຳໃຊ້ເງິນທີ່ໄດ້ມາຈາກງົບປະມານ, ຄ່າທຳນຽມ , ຈາກການຊ່ວຍເຫຼືອຕ່າງໆ ທີ່ ມີຢູ່ໃນບັນຊີເຂົ້າໃນ ການເຄື່ອນໄຫວວຽກງານການຈັດລະດັບຂັ້ນສະເພາະ ຢ່າງມີແຜນການຕາມ ເປົ້າໝາຍ ແລະ ພາລະບົດບາດຂອງຕົ .
- ສະຫລຸບລາຍງານການເຄື່ອນໄຫວວຽກງານຂອງຕົນ ພ້ອມທັງແຜນການແຕ່ລະໄລຍະໃຫ້ອົງກາ ທ່ອງທ່ຽວແຫ່ງຊາດ ຮັບຊາບ ຢ່າງ ເປັ ປົກກະຕິ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ ທາງຂັ້ນເທິງມອບໝາຍໃຫ້.

<u>ມາດຕາ 14</u>: **ຫ້ອງການ ຂອງ ຄະນະຮັບຜິດຊອບຈັດລະດັບຂັ້ນ ໂຮງແຮມ - ເຮືອນພັກ .:**

- ຫ້ອງການຂອງຄະນະຮັບຜິດຊອບຈັດລະດັບຂັ້ນ ໂຮງແຮມ,ເຮືອນພັກ , ຣິສອດ ຂັ້ນສູນກາງ ແມ່ນຕັ້ງຢູ່ໃນສຳນັກງານ ຂອງ ອົງການທ່ອງທ່ຽວແຫ່ງຊາດ ໂດຍເອົາກົມຄຸ້ມຄອງທຸລະກິດທ່ອງທ່ຽວ - ໂຮງແຮມ ເປັນຫ້ອງການຄະນະກຳມະການ.
- ຫ້ອງການຂອງຄະນະຮັບຜິດຊອບ ໂຮງແຮມ, ເຮືອນພັກ , ຂັ້ນທ້ອງຖິ່ນແມ່ນ ຕັ້ງຢູ່ໃນສຳນັກພະແ ກ / ຫ້ອງກາ ທ່ອງທ່ຽວແຂວງ, ະຄອ ຫລວງ.

<u>ມາດຕາ 15</u>: **ຫ້ອງການຄະນະກຳມະການຮັບຜິດຊອບຈັດລະດັບຂັ້ນ ໂຮງແຮມ,ເຮືອນພັກ** ມີພາລະບົດ ແລະ ໜ້າທີ່ ດັ່ງນີ້ :

1. ຮ່າງເອກະສານຕ່າງໆທີ່ກ່ຽວພັນກັບການຈັດລະດັບຂັ້ນ ໂຮງແຮມ, ເຮືອນພັກ.
2. ສ້າງແຜນການເຄື່ອນໄຫວ, ປັບປຸງ, ກວດກາ ການຈັດລະດັບຂັ້ນໂຮງແຮມ, ເຮືອນພັກ.
3. ສັງລວມຂໍ້ມູນ, ເອກະສານສະເຫນີ, ຄຳຮ້ອງຂອງຫົວໜ່ວຍທຸລະກິດທີ່ສະເຫນີມາຍັງ ຄະນະກຳມະການ ຮັບຜິດຊອບ ຈັດລະດັບຂັ້ນ ໂຮງແຮມ, ເຮືອນພັກ .
4. ບັນທຶກກອງປະຊຸມຂອງຄະນະກຳມະການຈັດລະດັບຂັ້ນໂຮງແຮມ, ເຮືອນພັກ.
5. ປະສານງານກັບພາກສ່ວນຕ່າງໆ ໃນການລົງກວດກາ, ປັບປຸງແລະການຈັດລະດັບຂັ້ນ ໂຮງແຮມ, ເຮືອ ພັກ .
6. ສະຫລຸບລາຍງາ ກາ ເຄື່ອນໄຫວ ຂອງ ຄະນະກຳມະການຮັບຜິດຊອບຈັດລະດັບຂັ້ນ ໂຮງແຮມ, ເຮືອນພັກ ໃຫ້ຂັ້ນເທິງຮັບຊາບທຸກໆໄລຍະ.

<u>ມາດຕາ 16</u>: **ກາ ກວດກາ:**

ກົມຄຸ້ມຄອງທຸລະກິດທ່ອງທ່ຽວໂຮງແຮມ ແລະ ຮ້າ ອາຫາ ເປັ ໃຈກາງໃ ກາ ປະສາງານກັບຄະນະກຳມະການຈັດລະດັບຂັ້ນໂຮງແຮມ,ເຮືອນພັກ,ຣິສອດຂັ້ນສູນກາງແລະຂັ້ນແຂວງ, ນະຄອນຫລວງ, ກວດກາການຈັດຕັ້ງປະຕິບັດເງື່ອນໄຂມາດຕະຖານການຈັດລະດັບຂັ້ນຂອງຫົວໜ່ວຍທຸລະກິດພັກແຮມ ຕາມພາລະບົດບາດຂອງຕົນໃນຂອບເຂດທົ່ວປະເທດ .

<u>ມາດຕາ 17</u>: **ກອງປະຊຸມຂອງຄະ ະກຳມະກາ ຈັດລະດັບຂັ້ ໂຮງແຮມ,ເຮືອ ພັກ .**

ກອງປະຊຸມຂອງຄະ ະກຳມະກາ ຈັດລະດັບຂັ້ນ ໂຮງແຮມ,ເຮືອນພັກ,ຈັດຂຶ້ນ ປີຫນຶ່ງ 2 ຄັ້ງຄືອາທິດທີ 4 ຂອງເດືອນ 3 ແລະອາທິດທີ 4 ຂອງເດືອນ 9 ໂດຍ ມີຈຸດປະສົງ ດັ່ງນີ້:

- ສະຫລຸບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ແລະ ແຜນການເຄື່ອນໄຫວໃນຕໍ່ຫ ້າ.
- ຄົ້ນຄວ້າພິຈາລະນາ ແລະ ຕົກລົງວິທີການແກ້ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບກາ ຈັດລະລະດັບຂັ້ນໂຮງແຮມ, ເຮືອນພັກ, ໃນຂອບເຂດທົ່ວປະເທດ.
- ສັງລວມບັນຫາຂໍ້ສະເຫນີ ແລະ ຄຳຄິດເຫັນຂອງທຸລະກິດທີ່ກ່ຽວຂ້ອງກັບການຈັດລະດັບຂັ້ນໂຮງແຮມ,ເຮືອນພັກ,ນຳສະເຫນີຕໍ່ຄະນະນຳ ອົງການທ່ອງທ່ຽວແຫ່ງຊາດເພື່ອພິຈາລະ

ໆ.

# ພາກທີ IV
# ກາ ເງິ

**<u>ມາດຕາ 18</u>: ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບດ້ານການເງິນໃຫ້ແກ່ການເຄື່ອນໄຫວ ຂອງຄະນະກຳມະການຈັດລະດັບຂັ້ນ ໂຮງແຮມ,ເຮືອ ພັກ ໄດ້ມາຈາກແຫລ່ງ ດັ່ງລຸ່ມນີ້:

- ງົບປະມານ ຂອງ ອົງການທ່ອງທ່ຽວແຫ່ງຊາດ.
- ຄ່າທຳນຽມຈັດລະດັບຂັ້ນ ຂອງ ຫົວໜ່ວຍ ທຸລະກິດໂຮງແຮມ, ເຮືອ ພັກ.
- ຮັບການຊ່ວຍເຫລືອຈາກພາກສ່ວນຕ່າງໆ ທີ່ ໃຫ້ການສະໜັບສະໜຸນໃນການຈັດລະດັບ ຂັ້ນ ໂຮງແຮມ, ເຮືອນພັກ,.

ເງິນທີ່ໄດ້ມາຈາກແຫຼ່ງລາຍຮັບຂ້າງເທິງຕ້ອງສ້າງບັນຊີສະເພາະຂອງ**ຄະ ະກຳມະກາ ຈັດລະດັບຂັ້ນ ໂຮງແຮມ , ເຮືອນພັກ** ແລະ ຮັກສາໄວ້ໃ ພະແ ກກາ ເງິ ຂອງ ອົງກາ ຂອງ ອົງກາ ທ່ອງທ່ຽວແຫ່ງຊາດ ແລະ ພະແ ກ / ຫ້ອງກາ ທ່ອງທ່ຽວປະຈຳແຂວງ, ະ ຄອ ຫລວງ.

**<u>ມາດຕາ 19</u>: ຄ່າທຳນຽມສະເພາະການຈັດລະດັບຂັ້ນ:**

ຄ່າທຳນຽມການຈັດລະດັບຂັ້ນ ໂຮງແຮມ, ເຮືອນພັກ, ຂອງ ຫົວຫ ່ວຍທຸລະກິດປະຕິບັດຕາມ ອັດຕາດັ່ງລຸ່ມນີ້ :

| * **<u>ລະດັບຂັ້ນໂຮງແຮມ</u>** | **<u>ຈຳ ວ ເງິ</u>** |
|---|---|
| 1 ດາວ | 500,000 ກີບ |
| 2 ດາວ | 600,000 ກີບ |
| 3 ດາວ | 800,000 ກີບ |
| 4 ດາວ | 1,200,000 ກີບ |
| 5 ດາວ | 1,500,000 ກີບ |

| * **<u>ລະດັບຂັ້ນເຮືອນພັກ</u>** | **<u>ຈຳ ວ ເງິ</u>** |
|---|---|
| 1 ດອກຈຳປາ | 300,000 ກີບ |
| 2 ດອກຈຳປາ | 400,000 ກີບ |
| 3 ດອກຈຳປາ | 500,000 ກີບ |

*<u>ໝາຍເຫດ</u> ສະເພາະເຄື່ອງໝາຍດາວ, ດອກຈຳປາ ຈະຄິດຕ່າງຫາກ,ຕາມຕົ້ນທຶນການຜະລິດ*

*ຕົວຈິງ.*

<u>ມາດຕາ 20</u>: **ຈຸດປະສົງກາ ່ າໃຊ້ເງິ :**

ຈຸດປະສົງ ຂອງ ການນຳໃຊ້ເງິນດັ່ງກ່າວ ແມ່ນຮັບໃຊ້ໃຫ້ແກ່ຄະນະກຳມະການ ຈັດລະດັບ ຂັ້ນ ໂຮງແຮມ,ເຮືອນພັກ ໃນການເຄື່ອນໄຫວວຽກງານຈັດລະດັບຂັ້ນ ຕາມບົດບາດ ແລະ ໜ້າທີ່ ຂອງຕົນ ແລະ ຮັບໃຊ້ໃຫ້ແກ່ການສ້າງ ແລະ ອອກແບບເຄື່ອງໝາຍຂອງລະດັບຂັ້ນ ໂຮງແຮມ, ເຮືອນພັກ ໃນທົ່ວປະເທດໃຫ້ເປັນເອກະພາບກັນ.

<u>ມາດຕາ 21</u>: **ກາ ອະ ຸມັດ າໃຊ້ເງິ :**

ລັດຖະມົນຕີ, ປະທານອົງການທ່ອງທ່ຽວແຫ່ງຊາດ ເປັນຜູ້ອະນຸມັດການນຳໃຊ້ເງິນດັ່ງກ່າວ ບົນພື້ນຖານການສະເໜີແຜນການ ຂອງ ຄະນະກຳມະການຈັດລະດັບຂັ້ນ ທີ່ ສະເໜີເຖິງ ອົງການທ່ອງທ່ຽວແຫ່ງຊາດຢ່າງເປັນທາງການ; ໃນກໍລະນີທີ່ ລັດຖະມົນຕີ, ປະທາ ອົງກາ ທ່ອງທ່ຽວແຫ່ງຊາດ ບໍ່ຢູ່ ແມ່ ມອບສິດໃຫ້ ຮອງປະທາ ຜູ້ປະຈຳກາ ເປັ ຜູ້ພິຈາລະ າອະ ຸມັດຕາມລະບຽບກາ .

## ພາກທີ V
## ກາ ປະຕິບັດ ະໂຍບາຍ ແລະ ກາ ໃຊ້ມາດຕະກາ

<u>ມາດຕາ 22</u>: **ນະໂຍບາຍຕໍ່ຫົວໜ່ວຍທຸລະກິດບໍລິການພັກແຮມທີ່ມີຜົນງານ:**

ຫົວໜ່ວຍທຸລະກິດ ໂຮງແຮມ, ເຮືອນພັກ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຕາມເງື່ອນໄຂມາດຕະຖານການຈັດລະດັບຂັ້ນ ແລະ ລະບຽບການອື່ນໆທີ່ວາງອອກຈະໄດ້ຮັບ ການຍ້ອງຍໍ ແລະ ປະຕິບັດ ະໂຍບາຍຕ່າງໆ ຕາມຄວາມເໝາະສົມ.

<u>ມາດຕາ 23</u>: **ຮູບກາ ປະຕິບັດ ະໂຍບາຍ.**

- **ໂຮງແຮມ 3 ຫາ 5 ດາວ ທີ່ໄດ້ຮັບການຈັດລະດັບຂັ້ນແລ້ວຈະໄດ້ຮັບເຄື່ອງໝາຍຂັ້ນ ເປັນຮູບດາວຕາມມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.**
- **ເຄື່ອງໝາຍ( LOGO ) ຂອງ ອົງການທ່ອງທ່ຽວແຫ່ງຊາດຊຶ່ງເປັນເຄື່ອງໝາຍຢັ້ງຢືນມາດຕະຖາ ແຫ່ງຄຸ ະພາບ.**

*** ໂຮງແຮມ 1 ດາວ ຫາ 2 ດາວທີ່ໄດ້ຮັບການຈັດລະດັບຂັ້ນແລ້ວຈະໄດ້ຮັບເຄື່ອງໝາຍຂັ້ນ ເປັນ ຮູບດາວ ຕາມ ມາດຕາ 3 ຂອງ ຂໍ້ຕົກລົງສະບັບນີ້.**

*** ເຮືອນພັກ 1 ຫາ 3 ດອກຈຳປາ ທີ່ໄດ້ຮັບການຈັດລະດັບຂັ້ນແລ້ວຈະໄດ້ຮັບ ເຄື່ອງໝາຍຂັ້ນປັນ ຮູບດອກຈຳປາ ຕາມມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.**

- **ເຄື່ອງໝາຍ( LOGO) ຂອງ ພະແນກ / ຫ້ອງການທ່ອງທ່ຽວແຂວງ, ນະຄອນຫລວງ ຊຶ່ງເປັນ**

**ເຄື່ອງໝາຍຢັ້ງຢືນມາດຕະຖານແຫ່ງຄຸນນະພາບ ຂອງ ໂຮງແຮມ 1 ດາວ ຫາ 2 ດາວ ; ເຮືອ ພັກ 1 ຫາ 3 ດອກຈຳປາ.**

**<u>ມາດຕາ 24</u> ມາດຕະກາ ຕໍ່ຜູ້ລະເມີດ:**

ຫົວໜ່ວຍທຸລະກິດພັກແຮມ ຫາກລະເມີດຂໍ້ກຳນົດ ວ່າດ້ວຍເງື່ອນໄຂມາດຕະຖານ ການ ກາ ຈັດລະດັບຂັ້ ໂຮງແຮມ, ເຮືອ ພັກ, ຈະໄດ້ຖືກປະຕິບັດມາດຕະກາ ຕາມແຕ່ກໍລະ ີ ດັ່ງນີ້:

- ຕັກເຕືອນ ( ຄັ້ງທີ I );
- ຕັກເຕືອນ ແລະ ປັບໃໝ ( ຄັ້ງທີ II );
- ປັບໃໝ ແລະ ໂຈະ ການດຳເນີນທຸລະກິດ ຊົ່ວຄາວ ( ຄັ້ງທີ III );
- ປັບໃໝ, ຖອນໃບອະນຸຍາດລະດັບຂັ້ນ ( ຄັ້ງສຸດທ້າຍ );

**<u>ມາດຕາ 25</u>: ສາຍເຫດຂອງກາ ປະຕິບັດມາດຕະກາ :**

- ບໍ່ປະຕິບັດຕາມຂໍ້ກຳນົດວ່າດ້ວຍການຈັດລະດັບຂັ້ນ ໂຮງແຮມ, ເຮືອ ພັກ.
- ປັບປຸງເງື່ອນໄຂ,ມາດຕະຖານ ໂຮງແຮມ, ເຮືອນພັກ ໂດຍບໍ່ໄດ້ຮັບອະນຸຍາດຈາກ ຄະນະກຳມະການ ຈັດລະດັບຂັ້ນ.
- ປອມແປງຫລືດັດແກ້ລະດັບເຄື່ອງໝາຍຂັ້ນ,ໃບຢັ້ງຢືນການຈັດລະດັບຂັ້ນ ໂຮງແຮມ, ເຮືອ ພັກ ຂອງຕົ ໂດຍ ບໍ່ໄດ້ຮັບອະ ຸຍາດ.
- ບໍ່ປະຕິບັດຕາມການແນະນຳຂອງຄະນະກຳມະການຈັດລະດັບຂັ້ນ ໂຮງແຮມ, ເຮືອນ ພັກ .
-ຈາກສາຍເຫດອື່ນໆທີ່ມີການລະເມີດເຖິງການຈັດລະດັບຂັ້ນໂຮງແຮມ,ເຮືອນພັກ,ມາດ ຕະຖາ ກາ ບໍລິກາ ຂອງ ທຸລະກິດ.

**<u>ມາດຕາ 26</u>: ມາດຕະກາ ປັບໃໝ:**

ມູນຄ່າການປັບໃໝ ແບ່ງອອກເປັນດັ່ງນີ້

+ <u>ຄັ້ງທີ 1:</u>

| | | |
|---|---|---|
| ສຳລັບໂຮງແຮມ | ປັບໃໝ | 500,000 ກີບ |
| ສຳລັບເຮືອ ພັກ | ປັບໃໝ | 300,000 ກີບ |

+ <u>ຄັ້ງທີ 2:</u>

| | | |
|---|---|---|
| ສຳລັບໂຮງແຮມ | ປັບໃໝ | 700,000 ກີບ |
| ສຳລັບເຮືອ ພັກ | ປັບໃໝ | 500,000 ກີບ |

+ <u>ຄັ້ງທີ 3:</u>

| | | |
|---|---|---|
| ສຳລັບໂຮງແຮມ | ປັບໃໝ | 1,000,000 ກີບ |
| ສຳລັບເຮືອ ພັກ | ປັບໃໝ | 700,000 ກີບ |

ຈຳນວນເງິນປັບໃຫມດັ່ງກ່າວແມ່ນເອົາເຂົ້າຮ່ວງຮັບໃຊ້ວຽກງານຂອງຄະນະກຳມະການຈັດລະດັບຂັ້ນ ໂຮງແຮມ, ເຮືອນພັກ.

## ພາກທີ VI
## ບົດບັ ຍັດສຸດທ້າຍ

**ມາດຕາ 27: ການຈັດຕັ້ງປະຕິບັດ:**

ມອບໃຫ້ກົມຄຸ້ມຄອງທຸລະກິດທ່ອງທ່ຽວ-ໂຮງແຮມ ເປັນໃຈກາງໃນການປະສານງາ ກັບບັນດາກົມພາຍໃນ ອົງການທ່ອງທ່ຽວແຫ່ງຊາດ ແລະພາກສ່ວນກ່ຽວຂ້ອງຕ່າງໆ ເພື່ອພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນສຳເລັດ, ໃນກໍລະນີມີບັນຫາໃຫ້ລາຍງານອົງການທ່ອງທ່ຽວແຫ່ງຊາດ ເພື່ອຂໍທິດຊີ້ນຳ.

**ມາດຕາ 28: ຜົ ສັກສິດ:**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫລັງ 30 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົ ຕີ,ປະທາ ອົງກາ ທ່ອງທ່ຽວແຫ່ງຊາດ**